ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 2241/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2019

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງການປຸກສ້າງ

- ອີງຕາມ ກົດໝາຍວ່າດ້ວຍ ການຜັງເມືອງ (ສະບັບປັບປຸງ) ສະບັບເລກທີ 40/ສພຊ, ລົງວັນທີ16 ພະຈິກ 2017;
- ອີງຕາມ ກົດໝາຍວ່າດ້ວຍ ການກໍ່ສ້າງ ສະບັບເລກທີ 159/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017.

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ ການປຸກສ້າງຢູ່ໃນຕົວເມືອງ ເພື່ອຮັບປະກັນໃຫ້ຜູ້ຂໍອະນຸຍາດໄດ້ຮັບຄວາມ ສະດວກ, ສະບາຍ, ວ່ອງໄວ ແລະ ໂປ່ງໃສ ພ້ອມທັງຮັບປະກັນໃຫ້ສິ່ງປຸກສ້າງມີຄວາມ ເປັນລະບຽບຮຽບຮ້ອຍ, ສວຍງາມ, ປອດໄພ, ມີສຸຂະນາໄມ, ມີເອກະລັກ, ກົມກືນ ກັບສະພາບແວດລ້ອມອ້ອມຂ້າງ ແລະ ຖືກຕ້ອງຕາມແຜນຜັງຕົວເມືອງ.

**ມາດຕາ 2. ການຄຸ້ມຄອງການປຸກສ້າງ**

ການຄຸ້ມຄອງການປຸກສ້າງ ແມ່ນຂະບວນການຈັດຕັ້ງປະຕິບັດການຄົ້ນຄວ້າພິຈາລະນາ ກ່ຽວກັບ ການອອກໃບອະນຸຍາດ, ຄວບຄຸມ ແລະ ຕິດຕາມກວດກາ ການປຸກສ້າງ ໃຫ້ຖືກຕ້ອງຕາມການອະນຸຍາດ.

ທຸກການປຸກສ້າງຢູ່ໃນຕົວເມືອງ ຕ້ອງຂໍອະນຸຍາດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດ, ພາຍຫຼັງໄດ້ຮັບໃບອະນຸຍາດແລ້ວ ຈຶ່ງສາມາດດຳເນີນການໄດ້.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ການປຸກສ້າງ** ໝາຍເຖິງ ການສ້າງ, ຕິດຕັ້ງ, ສ້ອມແປງ, ທັບມ້າງ, ຕໍ່ເຕີມ, ປ່ຽນແປງເປົ້າໝາຍການນຳໃຊ້, ການບູລະນະ ແລະ ປະຕິສັງຂອນ ສິ່ງປຸກສ້າງ;

2. **ການສ້າງ ຫຼື ກໍ່ສ້າງໃໝ່** ໝາຍເຖິງ ການນຳໃຊ້ວັດສະດຸກໍ່ສ້າງຕ່າງໆ ປະກອບເຂົ້າກັນເຮັດໃຫ້ມີ ສິ່ງປຸກສ້າງ ເກີດຂຶ້ນຢູ່ໃນຕອນດິນເປົ່າຫວ່າງ ຫຼື ໃນຕອນດິນ ທີ່ມີການທັບມ້າງສິ່ງປຸກສ້າງ ທີ່ມີຢູ່ແລ້ວ;

3. **ການຕິດຕັ້ງ** ໝາຍເຖິງ ການປະກອບ ໂຄງສ້າງ ແລະ ຊິ້ນສ່ວນເສົາ ໄຟຟ້າ, ໂທລະຄົມມະນາຄົມ, ປ້າຍໂຄສະນາ, ລະບົບທໍ່ນ້ຳປະປາ ແລະ ອື່ນໆ;

4. **ການສ້ອມແປງ** ໝາຍເຖິງ ການປັບປຸງ, ດັດແປງ, ປ່ຽນແປງຮູບຊົງພາຍນອກ, ແກ້ໄຂສ່ວນທີ່ເປ່ເພ, ຂຸດໂຊມ ແລະ ທັບມ້າງ ບາງສ່ວນຂອງສິ່ງປຸກສ້າງ;

5. **ການຕໍ່ເຕີມ** ໝາຍເຖິງ ການຂະຫຍາຍເນື້ອທີ່ ຫຼື ບໍລິມາດຂອງສິ່ງປຸກສ້າງທີ່ມີຢູ່ແລ້ວ;

6. **ການປ່ຽນແປງເປົ້າໝາຍການນຳໃຊ້** ໝາຍເຖິງ ການປ່ຽນແປງໜ້າທີ່ຮັບໃຊ້ ຂອງສິ່ງປຸກສ້າງ ທີ່ໄດ້ຮັບອະນຸຍາດປຸກສ້າງແລ້ວ ເພື່ອນຳໃຊ້ໃນຈຸດປະສົງອື່ນ;

7. **ການບູລະນະ** ໝາຍເຖິງ ຂະບວນການສ້ອມແປງ, ຮັກສາຮູບແບບ, ລວດລາຍ ແລະ ລາຍລະອຽດເດີມຂອງສິ່ງປຸກສ້າງ ໂດຍມີການຕໍ່ເຕີມ ແລະ ເສີມສ່ວນດັ້ງເດີມທີ່ຂາດຫາຍໄປໃຫ້ສົມບູນ;

8. **ປະຕິສັງຂອນ** ໝາຍເຖິງ ການບູລະນະສ້າງຄືນໃໝ່ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານ ປະຫວັດສາດ, ວັດທະນະທຳ, ທັດສະນີຍະພາບທຳມະຊາດຄືນສູ່ສະພາບ ແລະ ເອກະລັກດັ້ງເດີມ;

9. **ສິ່ງປຸກສ້າງ** ໝາຍເຖິງ ຜະລິດຕະພັນຂອງວຽກງານກໍ່ສ້າງ ເຊັ່ນ ອາຄານ, ອົງປະກອບຂອງ ລະບົບໂຄງລ່າງພື້ນຖານທາງດ້ານ ເຕັກນິກ ແລະ ສັງຄົມ ຊຶ່ງອາດຕັ້ງຢູ່ເທິງ ໜ້າດິນ, ໜ້ານ້ຳ, ໃຕ້ດິນ ແລະ ໃຕ້ນ້ຳ; ຊຶ່ງແບ່ງອອກເປັນ ສາມ ຂະໜາດ ຄື:

1. ຂະໜາດໃຫຍ່ ມີເນື້ອທີ່ແຕ່ 10,000 ຕາແມັດ ຂຶ້ນໄປ;
2. ຂະໜາດກາງ ມີເນື້ອທີ່ແຕ່ 400-10,000 ຕາແມັດ;
3. ຂະໜາດນ້ອຍ ມີເນື້ອທີ່ ບໍ່ເກີນ 400 ຕາແມັດ.

10. **ອາຄານຄອບຄຸມ** ໝາຍເຖິງ ອາຄານຂະໜາດໃຫຍ່ ທີ່ຮັບໃຊ້ມວນຊົນເປັນຈຳນວນຫຼວງຫຼາຍ, ອາຄານສູງ ຫຼາຍກວ່າ 20 ແມັດຂຶ້ນໄປ ແລະ ອາຄານທີ່ມີຄວາມສ່ຽງ;

11. **ການປັບລະດັບໜ້າດິນປຸກສ້າງ** ໝາຍເຖິງ ການຂຸດດິນ ຫຼື ຖົມດິນ ໃນຂອບເຂດຕອນດິນ ທີ່ຈະປຸກສ້າງ ໃຫ້ໄດ້ລະດັບທີ່ຕ້ອງການ;

12. **ໃບຢັ້ງຢືນຜັງເມືອງ** ໝາຍເຖິງ ເອກະສານ ທີ່ສະໜອງຂໍ້ມູນ ກ່ຽວກັບ ແຜນການນຳໃຊ້ທີ່ດິນທີ່ໄດ້ກຳນົດໄວ້ຢູ່ໃນແຜນຜັງຕົວເມືອງ ທີ່ລັດໄດ້ຮັບຮອງ;

13. **ສັນຍາກັບຜູ້ຢູ່ຂ້າງຄຽງ** ໝາຍເຖິງ ເອກະສານຢັ້ງຢືນການເຫັນດີ ຂອງເຈົ້າຂອງກຳມະສິດທີ່ດິນ ທີ່ຢູ່ຕິດແປະກັບຕອນດິນ ຂອງຜູ້ຂໍອະນຸຍາດປຸກສ້າງ;

14. **ກວດກາໄລຍະຕົ້ນ** ໝາຍເຖິງ ການກວດກາເພື່ອຮັບປະກັນຄວາມຖືກຕ້ອງ ໃນການປັກຜັງໂຄງການຕາມການກຳນົດ ເສັ້ນແຖວ ແລະ ເສັ້ນເຂດແດນຕອນດິນ ຕາມການອະນຸຍາດປຸກສ້າງ;

15. **ກວດກາໄລຍະກາງ** ໝາຍເຖິງ ການກວດກາເພື່ອຮັບປະກັນຄວາມຖືກຕ້ອງ ໃນການປະຕິບັດບັນດາໜ້າວຽກການປຸກສ້າງຕາມແບບແຜນຜັງທີ່ໄດ້ຮັບອະນຸຍາດ;

16. **ກວດກາໄລຍະທ້າຍ** ໝາຍເຖິງ ການກວດກາ ສິ່ງປຸກສ້າງທີ່ສຳເລັດແລ້ວ ຕາມແບບແຜນຜັງທີ່ໄດ້ຮັບການອະນຸຍາດ ເພື່ອເປັນບ່ອນອີງໃຫ້ແກ່ການອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ.

### ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ກັບທຸກກິດຈະການປຸກສ້າງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ໃນຕົວເມືອງ ຕາມການກຳນົດຂອງແຜນຜັງຕົວເມືອງ ໃນຂອບເຂດທົ່ວປະເທດ.

ຂໍ້ຕົກລົງສະບັບນີ້ ບໍ່ໄດ້ນຳໃຊ້ສຳລັບກິດຈະການປຸກສ້າງ ທີ່ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໂດຍກົງ ແລະ ໂຄງການພັດທະນາຕົວເມືອງ ທີ່ໄດ້ຈັດຕັ້ງປະຕິບັດຖືກຕ້ອງຕາມແຜນຜັງລະອຽດ ທີ່ໄດ້ຜ່ານການຮັບຮອງຢ່າງເປັນທາງການແລ້ວ.

## ໝວດທີ II
## ລັກສະນະ ແລະ ລະດັບ ຂອງການອະນຸຍາດປຸກສ້າງ

### ມາດຕາ 5. ລັກສະນະຂອງການອະນຸຍາດປຸກສ້າງ

ການປຸກສ້າງແບ່ງອອກເປັນ ສີ່ ລັກສະນະ ດັ່ງນີ້:

1. ການ ສ້າງ ແລະ ຕິດຕັ້ງ;
2. ການ ຕໍ່ເຕີມ ແລະ ປ່ຽນແປງເປົ້າໝາຍການນຳໃຊ້;
3. ການ ບູລະນະ ແລະ ປະຕິສັງຂອນ.
4. ການ ທັບມ້າງ ແລະ ສ້ອມແປງ;

### ມາດຕາ 6. ລະດັບການອະນຸຍາດປຸກສ້າງ

ເພື່ອເຮັດໃຫ້ການຄຸ້ມຄອງການປຸກສ້າງ ມີປະສິດທິພາບ ແລະ ປະສິດທິຜົນສູງ ການອະນຸຍາດປຸກສ້າງໄດ້ແບ່ງອອກເປັນ ສາມ ລະດັບ ຕາມຂະໜາດຂອງສິ່ງປຸກສ້າງ ແລະ ລະດັບຜົນກະທົບດັ່ງນີ້:

**ລະດັບ 1.** ອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ອົງການປົກຄອງ ຂັ້ນແຂວງ ເປັນຜູ້ຕົກລົງອອກອະນຸມັດ ປະກອບມີ:

- ການ ສ້າງ ແລະ ຕິດຕັ້ງ ສິ່ງປຸກສ້າງ ທີ່ມີຂະໜາດໃຫຍ່ ມີ ຜົນກະທົບສູງ ຕໍ່ ສິ່ງແວດລ້ອມ ແລະ ຜູ້ຢູ່ອາໄສອ້ອມຂ້າງ ແລະ ອາຄານປະເພດຄວບຄຸມ;
- ການບູລະນະ ແລະ ປະຕິສັງຂອນ.

**ລະດັບ 2.** ອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກ ໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ເປັນຜູ້ពິກລັ່ງອອກອະນຸມັດ ປະກອບມີ:

- ການ ສ້າງ ແລະ ຕິດຕັ້ງ ສິ່ງປຸກສ້າງ ທີ່ມີຂະໜາດກາງ ຊຶ່ງມີຜົນກະທົບປານກາງ ຕໍ່ ສິ່ງແວດລ້ອມ ແລະ ຜູ້ຢູ່ອາໄສອ້ອມຂ້າງ;
- ການ ຕໍ່ເຕີມ ແລະ ປ່ຽນແປງເປົ້າໝາຍການນຳໃຊ້;
- ການທັບມ້າງ ສິ່ງປຸກສ້າງຂະໜາດໃຫຍ່.

**ລະດັບ 3.** ອົງການຄຸ້ມຄອງການຜັງເມືອງ ຂັ້ນເມືອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ອົງການ ປົກຄອງ ຂັ້ນເມືອງ ເປັນຜູ້ពិກລັ່ງອອກອະນຸມັດ ປະກອບມີ:

- ການ ສ້າງ ແລະ ຕິດຕັ້ງ ສິ່ງປຸກສ້າງ ທີ່ມີຂະໜາດນ້ອຍ ຊຶ່ງມີຜົນກະທົບຕ່ຳ ຕໍ່ ສິ່ງແວດລ້ອມ ແລະ ຜູ້ຢູ່ອາໄສອ້ອມຂ້າງ;
- ການ ທັບມ້າງ ແລະ ສ້ອມແປງ ຂະໜາດນ້ອຍ.

ລາຍລະອຽດເບິ່ງໃນ ເອກະສານຊ້ອນທ້າຍທີ 1: ຕາຕະລາງຈັດລະດັບຂອງສິ່ງປຸກສ້າງ.

## ໝວດທີ III
## ຂໍ້ມູນຜັງເມືອງ, ການສຳຫຼວດ-ອອກແບບ ແລະ ແຜນຜັງຂໍອະນຸຍາດປຸກສ້າງ

### ມາດຕາ 7. (ໃໝ່) ຂໍ້ມູນຜັງເມືອງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສຳຫຼວດ-ອອກແບບ ສິ່ງປຸກສ້າງ ສາມາດ ຊອກຮູ້ຂໍ້ມູນຜັງເມືອງ ຈາກ ເວບໄຊທ໌ ຫຼື ອົງການຄຸ້ມຄອງການຜັງເມືອງ ທີ່ກ່ຽວຂ້ອງ ກັບຕອນດິນ ທີ່ຈະປຸກສ້າງ ຕາມແຜນຜັງຕົວເມືອງທີ່ໄດ້ຜ່ານການຮັບຮອງຢ່າງເປັນທາງການແລ້ວ.

ໃນກໍລະນີຈຳເປັນ ກໍສາມາດຂໍໃບຢັ້ງຢືນຜັງເມືອງຈາກອົງການຄຸ້ມຄອງການຜັງເມືອງໄດ້.

### ມາດຕາ 8. (ໃໝ່) ການສຳຫຼວດ-ອອກແບບສິ່ງປຸກສ້າງ

ການສຳຫຼວດ-ອອກແບບສິ່ງປຸກສ້າງ ຕ້ອງໃຫ້ສອດຄ່ອງກັບ ລະບຽບການນຳໃຊ້ທີ່ດິນ ຕາມ ແຜນຜັງຕົວເມືອງ; ຜູ້ສຳຫຼວດ-ອອກແບບ ຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມ ກົດ ໝາຍ, ລະບຽບການກຳນົດ ແລະ ມີຄວາມຮັບຜິດຊອບຕໍ່ໂຄງການສຳຫຼວດ-ອອກແບບຂອງຕົນ.

### ມາດຕາ 9. (ໃໝ່) ແຜນຜັງຂໍອະນຸຍາດປຸກສ້າງ

ແຜນຜັງຂໍອະນຸຍາດປຸກສ້າງ ປະກອບດ້ວຍ ແຜນຜັງທີ່ຕັ້ງ, ຈັດສັນລະອຽດຂອງຕອນດິນ, ສະຖາປັດຕະຍະກຳ, ວິສະວະກຳ ພ້ອມທັງ ລະບົບ ຕາໜ່າງຖະໜົນ, ນ້ຳປະປາ, ໄຟຟ້າ, ລະບາຍ ນ້ຳຝົນ ແລະ ນ້ຳເປື້ອນ.

ສຳລັບການປຸກສ້າງເຮືອນຢູ່ ຂະໜາດນ້ອຍ ທີ່ມີເນື້ອທີ່ນຳໃຊ້ລວມ ຕ່ຳກວ່າ 120 ຕາແມັດ ຜູ້ຂໍອະນຸຍາດສາມາດນຳໃຊ້ ແຜນຜັງເກົ່າ ຫຼື ແຜນຜັງຕົວແບບ ທີ່ໄດ້ຮັບອະນຸຍາດແລ້ວ.

## ໝວດທີ IV
## ຂັ້ນຕອນການອອກອະນຸຍາດປຸກສ້າງ

**ມາດຕາ 10. ການປະກອບເອກະສານຂໍອະນຸຍາດປຸກສ້າງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດປຸກສ້າງ ຕ້ອງປະກອບເອກະສານ ສາມ ຊຸດ ຍື່ນຕໍ່ອົງການຄຸ້ມຄອງການຜັງເມືອງຂັ້ນເມືອງ ຫຼື ໜ່ວຍງານບໍລິການປະຕູດຽວ ດັ່ງນີ້:

1. ໃບສະເໜີ ຂໍອະນຸຍາດປຸກສ້າງ;
2. ໃບຢັ້ງຢືນທີ່ຢູ່ (ອາຍຸບໍ່ເກີນສາມເດືອນ) ຫຼື ໃບສຳເນົາສຳມະໂນຄົວ ຂອງຜູ້ຂໍອະນຸຍາດ;
3. ສຳເນົາເອກະສານຢັ້ງຢືນກຳມະສິດນຳໃຊ້ທີ່ດິນປະເພດດິນປຸກສ້າງ;
4. ສັນຍາກັບຜູ້ຢູ່ຂ້າງຄຽງ;
5. ຊຸດແຜນຜັງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9, ພ້ອມທັງ ຮູບຖ່າຍ ຫຼື ຮູບທັດສະນີຍະພາບ ສະຖານທີ່ປຸກສ້າງ ແລະ ອາຄານຂ້າງຄຽງ;
6. ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ, ໃນກໍລະນີທີ່ໂຄງການປຸກສ້າງມີຜົນກະທົບຕໍ່ສິ່ງແວດລ້ອມປານກາງ ຫາ ສູງ;
7. ໃນກໍລະນີຂໍອະນຸຍາດປຸກສ້າງ ອາຄານປະເພດຄວບຄຸມ ຫຼື ໃນເຂດ ມໍຣະດົກ, ປົກປັກຮັກສາຕົວເມືອງເກົ່າ ແລະ ສະຖານບູຮານ ຈະຕ້ອງໄດ້ປະກອບ ໃບຢັ້ງຢືນ ກ່ຽວກັບ ການປະຕິບັດລະບຽບການ ຄວບຄຸມອາຄານ ແລະ ຄຸ້ມຄອງມໍຣະດົກ.

**ມາດຕາ 11. ການຄົ້ນຄວ້າ ແລະ ການອອກອະນຸຍາດປຸກສ້າງ**

ພາຍຫຼັງທີ່ ອົງການຄຸ້ມຄອງການຜັງເມືອງຂັ້ນເມືອງ ຫຼື ໜ່ວຍງານບໍລິການປະຕູດຽວ ທີ່ກ່ຽວຂ້ອງ ໄດ້ຮັບເອກະສານຈາກຜູ້ຂໍອະນຸຍາດປຸກສ້າງແລ້ວ ຕ້ອງດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ກວດກາສຳນວນເອກະສານຂໍອະນຸຍາດປຸກສ້າງ ເມື່ອເຫັນວ່າຖືກຕ້ອງ ແລະ ຄົບຖ້ວນ ແລ້ວກໍຮັບເອົາເອກະສານ ເພື່ອພິຈາລະນາ; ຖ້າເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນໃຫ້ສົ່ງຄືນ ໂດຍມີການແນະນຳໃຫ້ປະກອບຄືນໃໝ່;

2. ນຳສົ່ງເອກະສານຂໍອະນຸຍາດປຸກສ້າງທີ່ໄດ້ຮັບເອົາແລ້ວ ໃຫ້ອົງການຄຸ້ມຄອງການຜັງເມືອງຂັ້ນຕ່າງໆ ຕາມການຈັດລະດັບການປຸກສ້າງ ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;

3. ພາຍຫຼັງໄດ້ຮັບເອກະສານແລ້ວ ອົງການຄຸ້ມຄອງການຜັງເມືອງທີ່ຮັບຜິດຊອບ ຕ້ອງລົງກວດກາສະຖານທີ່ປຸກສ້າງຕົວຈິງ ຮ່ວມກັບຜູ້ຂໍອະນຸຍາດ ແລ້ວດຳເນີນການຄົ້ນຄວ້າພິຈາລະນາ ບົນພື້ນຖານ ລະບຽບການຜັງເມືອງກຳນົດ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

4. ສຳລັບໂຄງການປຸກສ້າງ ລະດັບ 1 ອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ ຕ້ອງສະເໜີຜົນການຄົ້ນຄວ້າ ຜ່ານກອງປະຊຸມປຸກສ້າງ ເພື່ອຕົກລົງເປັນເອກະພາບ ກ່ຽວກັບ ການອະນຸຍາດ ຫຼື ບໍ່ອະນຸຍາດ ປຸກສ້າງ;

5. ຜ່ານການຄົ້ນຄວ້າ ຖ້າເຫັນວ່າເອກະສານຂໍອະນຸຍາດປຸກສ້າງຖືກຕ້ອງ ຕ້ອງນຳສະເໜີອົງການປົກຄອງ ຂັ້ນແຂວງ, ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງຂັ້ນເມືອງ ພິຈາລະນາອະນຸມັດ ຕາມລະດັບ. ຖ້າບໍ່ຖືກຕ້ອງ ອົງການຄຸ້ມຄອງການຜັງເມືອງ ທີ່ກ່ຽວຂ້ອງຕ້ອງແຈ້ງຜົນການຄົ້ນຄວ້າເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດປຸກສ້າງຊາບ;

6. ການອອກອະນຸຍາດປຸກສ້າງ ລະດັບຕ່າງໆ ຕ້ອງໃຫ້ສຳເລັດ ພາຍໃນ ສາມສິບວັນລັດຖະການ.

### ມາດຕາ 12. (ໃໝ່) ກອງປະຊຸມປຸກສ້າງ

ກອງປະຊຸມປຸກສ້າງ ປະກອບດ້ວຍ ຕົວແທນຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ, ອຸດສະຫະກຳ ແລະ ການຄ້າ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ ແລະ ປ່າໄມ້, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເຂົ້າຮ່ວມ ໂດຍການເປັນປະທານຂອງອົງການປົກຄອງ ຂັ້ນແຂວງ, ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຫຼື ຜູ້ທີ່ໄດ້ຮັບການມອບໝາຍ ຊຶ່ງມີອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ ເປັນກອງເລຂາ.

### ມາດຕາ 13. ໃບອະນຸຍາດປຸກສ້າງ

ໃບອະນຸຍາດປຸກສ້າງ ແມ່ນເອກະສານອະນຸຍາດໃຫ້ດຳເນີນການປຸກສ້າງໄດ້ ຕາມລະບຽບການ ຊຶ່ງມີອາຍຸການນຳໃຊ້ ພາຍໃນກຳນົດເວລາ ຫົກເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຖ້າບໍ່ໄດ້ລົງມືປຸກສ້າງ ຕາມກຳນົດເວລາດັ່ງກ່າວ ຜູ້ຂໍອະນຸຍາດຕ້ອງໄດ້ແຈ້ງຂໍຕໍ່ອາຍຸການນຳໃຊ້ຄືນໃໝ່. ການຂໍຕໍ່ອາຍຸໃບອະນຸຍາດແມ່ນໄດ້ພຽງຄັ້ງດຽວ ແລະ ອະນຸຍາດຕໍ່ໄດ້ບໍ່ໃຫ້ເກີນ ຫົກເດືອນ.

ພາຍຫຼັງທີ່ໄດ້ມີການປຸກສ້າງຕາມການອະນຸຍາດແລ້ວ ໃບອະນຸຍາດດັ່ງກ່າວຈະຍັງມີຄຸນຄ່ານຳໃຊ້ເປັນຫຼັກຖານໃນການປຸກສ້າງຢ່າງຖືກຕ້ອງຈົນກວ່າຈະສຳເລັດຕາມແຜນການ.

## ໝວດທີ V
## ການຕິດຕາມການປຸກສ້າງ

### ມາດຕາ 14. ການຕິດຕາມກວດກາ ການປຸກສ້າງ

ການຕິດຕາມການປຸກສ້າງ ແມ່ນການລົງກວດກາໃນເວລາຈັດຕັ້ງປະຕິບັດ ໂຄງການປຸກສ້າງເພື່ອຄວບຄຸມການປຸກສ້າງໃຫ້ເປັນໄປຕາມການອະນຸມັດ. ອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ອອກອະນຸຍາດ ຕ້ອງລົງກວດກາຢ່າງໜ້ອຍ ສາມ ຄັ້ງ ຄື: ກວດກາ ໄລຍະຕົ້ນ, ໄລຍະກາງ ແລະ ໄລຍະທ້າຍ;

ການລົງກວດກາແຕ່ລະຄັ້ງ ຕ້ອງໄດ້ເຮັດ ບົດບັນທຶກຜົນການກວດກາ ແລະ ປຶກສາຫາລືກ່ຽວກັບ ການດັດແກ້ແບບແຜນຜັງ (ຖ້າມີ) ຮ່ວມກັບຜູ້ໄດ້ຮັບອະນຸຍາດປຸກສ້າງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດເພື່ອໃຊ້ເປັນຫຼັກຖານ ຫຼື ບ່ອນອີງໃຫ້ແກ່ການພິຈາລະນາ ອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ.

**ມາດຕາ 15. ການຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ**

ພາຍຫຼັງສິ່ງປຸກສ້າງສຳເລັດແລ້ວ ຜູ້ໄດ້ຮັບອະນຸຍາດປຸກສ້າງຕ້ອງແຈ້ງໃຫ້ ອົງການຄຸ້ມຄອງການຜັງເມືອງ ຂັ້ນແຂວງ, ຂັ້ນເມືອງ ຊາບ ເພື່ອລົງກວດກາໄລຍະທ້າຍ ໂດຍມີການເຂົ້າຮ່ວມຂອງເຈົ້າໜ້າທີ່ຜັງເມືອງ. ຫຼັງຈາກກວດກາສຳເລັດແລ້ວ ຕ້ອງໄດ້ລາຍງານຜົນການກວດກາໃຫ້ ອົງການຄຸ້ມຄອງການຜັງເມືອງແຕ່ລະຂັ້ນ ເພື່ອພິຈາລະນາ ແລະ ນຳສະເໜີອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ຕາມຄວາມຮັບຜິດຊອບຂອງຕົນ ພາຍໃນ ສິບຫ້າວັນ ລັດຖະການ.

**ມາດຕາ 16. ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ**

ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ແມ່ນເອກະສານທີ່ມີຄຸນຄ່າທາງດ້ານກົດໝາຍອອກໃຫ້ສະເພາະການປຸກສ້າງ ລັກສະນະທີ 1 ຕາມມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ສຳເລັດ ແລະ ຖືກຕ້ອງຕາມການອະນຸຍາດ; ສ່ວນການປຸກສ້າງໃນລັກສະນະອື່ນ ແມ່ນໃຫ້ເຮັດແຕ່ບົດບັນທຶກຜົນການກວດກາໄລຍະທ້າຍ ໄວ້ເປັນຫຼັກຖານ.

ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ລະດັບ 1 ແລະ 2 ແມ່ນພະແນກ ໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ເປັນຜູ້ຕົກລົງ, ສຳລັບ ລະດັບ 3 ແມ່ນອົງການປົກຄອງ ຂັ້ນເມືອງ ເປັນຜູ້ຕົກລົງ. ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ທຸກລະດັບ ມີອາຍຸການນຳໃຊ້ ຈົນກວ່າສິ່ງປຸກສ້າງຈະເຊື່ອມຄຸນນະພາບ.

**ມາດຕາ 17. ການເກັບມ້ຽນເອກະສານປຸກສ້າງ**

ພາຍຫຼັງທີ່ໄດ້ອອກໃບອະນຸຍາດ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຂອງສິ່ງປຸກສ້າງແລ້ວ ອົງການຄຸ້ມຄອງການຜັງເມືອງ ແຕ່ລະຂັ້ນ ຕ້ອງເກັບມ້ຽນເອກະສານປຸກສ້າງຄົບຊຸດ ບ່ອນລະ 1 ຊຸດ ແລະ ຜູ້ທີ່ໄດ້ຮັບການອະນຸຍາດປຸກສ້າງ ເກັບມ້ຽນ 1 ຊຸດ.

## ໝວດທີ VI
## ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບອະນຸຍາດປຸກສ້າງ ແລະ ຜູ້ຮັບເໝົາ

**ມາດຕາ 18. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດປຸກສ້າງ**

ຜູ້ໄດ້ຮັບອະນຸຍາດປຸກສ້າງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຈ່າຍຄ່າທຳນຽມອະນຸຍາດປຸກສ້າງ ຕາມກົດໝາຍ ແລະ ລະບຽບການກຳນົດ;
2. ແຈ້ງມື້ຈະລົງມືກໍ່ສ້າງຕົວຈິງ ໃຫ້ອົງການປົກຄອງຂັ້ນທີ່ກ່ຽວຂ້ອງຊາບ ແລະ ຕິດຕັ້ງປ້າຍບອກຂໍ້ມູນ ກ່ຽວກັບກິດຈະການປຸກສ້າງ ຢູ່ດ້ານໜ້າ ຫຼື ບ່ອນທີ່ສາມາດເຫັນໄດ້ງ່າຍ ໃນສະຖານທີ່ປຸກສ້າງ;
3. ດຳເນີນການປຸກສ້າງ ໃຫ້ຖືກຕ້ອງຕາມການອະນຸຍາດ ແລະ ບົດບັນທຶກຜົນການກວດກາແຕ່ລະໄລຍະ;
4. ແຈ້ງ ແລະ ສະໜອງຂໍ້ມູນ, ຂ່າວສານ ຫຼື ເອກະສານຕ່າງໆ ໃຫ້ອົງການຄຸ້ມຄອງການຜັງເມືອງ ເພື່ອລົງຕິດຕາມ, ກວດກາ ໃນແຕ່ລະໄລຍະດຳເນີນ ແລະ ສຳເລັດການປຸກສ້າງ;

5. ສົມທົບກັບຜູ້ຮັບເໝົາປະຕິບັດຢ່າງເຂັ້ມງວດ ຕໍ່ກັບມາດຕະຖານ ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສະພາບແວດລ້ອມ.

**ມາດຕາ 19. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ຮັບເໝົາປຸກສ້າງ**

ຜູ້ຮັບເໝົາປຸກສ້າງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້ :

1. ຈັດວາງຜັງສໍາລັບການກໍ່ສ້າງໃໝ່ ໃຫ້ຖືກຕ້ອງຕາມເສັ້ນແຖວປຸກສ້າງ ຕາມທີ່ໄດ້ກໍານົດໄວ້ໃນແຜນຜັງຕົວເມືອງ, ດໍາເນີນການປຸກສ້າງ ໃຫ້ຖືກຕາມແບບແຜນຜັງ ທີ່ໄດ້ຮັບອະນຸຍາດ ແລະ ຮັບປະກັນຄຸນນະພາບ ຕາມມາດຕະຖານເຕັກນິກທີ່ກໍານົດໄວ້;

2. ຈັດສະຖານທີ່ປຸກສ້າງໃຫ້ເປັນລະບຽບ, ປະຕິບັດມາດຕະການ ປ້ອງກັນຄວາມປອດໄພ, ປ້ອງກັນແຮງງານ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມຢ່າງເຂັ້ມງວດ;

3. ຈັດວາງ ພາຫະນະ, ກົນຈັກ, ເຄື່ອງມື, ອຸປະກອນ ແລະ ວັດສະດຸກໍ່ສ້າງ ໃຫ້ເປັນລະບຽບຮຽບຮ້ອຍ, ບໍ່ກີດຂວາງການສັນຈອນ ແລະ ບໍ່ສ້າງຜົນກະທົບທາງລົບ ຕໍ່ຜູ້ຢູ່ອາໄສອ້ອມຂ້າງ;

4. ສ້າງສິ່ງອໍານວຍຄວາມສະດວກ ໃນການສັນຈອນໄປ-ມາ ໃຫ້ແກ່ ຜູ້ຢູ່ອາໄສໃນບໍລິເວນອ້ອມແອ້ມເຂດປຸກສ້າງ ໃນກໍລະນີມີຄວາມຈໍາເປັນ;

5. ພາຍຫຼັງສໍາເລັດການກໍ່ສ້າງ ຕ້ອງອະນາໄມສະຖານທີ່ກໍ່ສ້າງ ພ້ອມທັງຮື້ຖອນ, ເກັບມ້ຽນພາຫະນະ, ກົນຈັກ, ເຄື່ອງມື, ອຸປະກອນ, ວັດສະດຸກໍ່ສ້າງ ແລະ ສິ່ງເສດເຫຼືອ ອື່ນໆ.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 20. (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນການປຸກສ້າງໂດຍບໍ່ໄດ້ຮັບອະນຸຍາດ, ປຸກສ້າງບໍ່ຖືກຕາມແບບແຜນຜັງ ທີ່ໄດ້ຮັບອະນຸຍາດ ຫຼື ດັດແກ້ແບບແຜນຜັງ ໂດຍບໍ່ໄດ້ຮັບການເຫັນດີ ຈາກອົງການຄຸ້ມຄອງການຜັງເມືອງທີ່ກ່ຽວຂ້ອງ;
2. ສໍາຫຼວດ-ອອກແບບ ແລະ ກໍ່ສ້າງ ສິ່ງປຸກສ້າງ ບໍ່ຖືກຕ້ອງຕາມແຜນຜັງຕົວເມືອງ, ລະບຽບການນໍາໃຊ້ທີ່ດິນຜັງເມືອງ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
3. ດໍາເນີນການປຸກສ້າງຢູ່ໃນເຂດຫວງຫ້າມ ທີ່ກໍານົດໄວ້ຢູ່ໃນແຜນຜັງຕົວເມືອງ ເພື່ອປົກປັກຮັກສາ ມໍລະດົກທາງດ້ານວັດທະນະທໍາ, ສິ່ງແວດລ້ອມທໍາມະຊາດ-ສັງຄົມ ແລະ ເຂດທີ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ;
4. ທັບມ້າງ, ຕໍ່ເຕີມ, ທໍາລາຍ ສິ່ງປຸກສ້າງ ຫຼື ຊັບສິນສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

5. ຂົນສົ່ງວັດສະດຸກໍ່ສ້າງ ໂດຍບໍ່ສອດຄ່ອງກັບລະບຽບການຂົນສົ່ງໃນຕົວເມືອງ ແລະ ບໍ່ຮັບປະກັນຄວາມປອດໄພ, ເຮັດໃຫ້ເກີດມີການຕົກເຮ່ຍ, ສ້າງຄວາມເປິະເປື້ອນໃສ່ໜ້າທາງ, ສະຖານທີ່ສາທາລະນະ ຫຼື ສະຖານທີ່ຂອງຜູ້ອື່ນ.

**ມາດຕາ 21. (ໃໝ່) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຜັງເມືອງ ແລະ ເຈົ້າໜ້າທີ່ອື່ນ**

ຫ້າມພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຜັງເມືອງ ແລະ ເຈົ້າໜ້າທີ່ອື່ນ ມີພຶດຕິກຳ ດັ່ງນີ້:

1. ຄົ້ນຄວ້ານຳສະເໜີ ອອກອະນຸຍາດປຸກສ້າງ ຫຼື ເຫັນດີໃຫ້ມີການດັດແກ້ແບບແຜນຜັງ ໂດຍບໍ່ຖືກຕ້ອງຕາມແຜນຜັງຕົວເມືອງ, ລະບຽບການນຳໃຊ້ທີ່ດິນຜັງເມືອງ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

2. ກົດໜ່ວງຖ່ວງດຶງ ເອກະສານຂໍອະນຸຍາດປຸກສ້າງ, ບໍ່ປະຕິບັດໜ້າທີ່ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ຫຼື ເມີນເສີຍຕໍ່ການກະທຳທີ່ບໍ່ຖືກຕ້ອງ ຂອງຜູ້ໄດ້ຮັບອະນຸຍາດ ຫຼື ຜູ້ຮັບເໝົາປຸກສ້າງ;

3. ສົມຮູ້ຮ່ວມຄິດກັບ ຜູ້ໄດ້ຮັບອະນຸຍາດ ຫຼື ຜູ້ຮັບເໝົາປຸກສ້າງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກ ໂດຍບໍ່ຊອບທຳ ຫຼື ມີການລະເມີດລະບຽບກົດໝາຍ.

## ໝວດທີ VIII
## ອົງການຄຸ້ມຄອງການຜັງເມືອງ

**ມາດຕາ 22. ອົງການຄຸ້ມຄອງການຜັງເມືອງ**

ອົງການຄຸ້ມຄອງການຜັງເມືອງໃນຂອບເຂດທົ່ວປະເທດ ປະກອບດ້ວຍຂັ້ນຕ່າງໆ ດັ່ງນີ້:

1. ຂັ້ນສູນກາງ : ກົມເຄຫາ ແລະ ຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ ;
2. ຂັ້ນແຂວງ : ຂະແໜງເຄຫາ ແລະ ຜັງເມືອງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ;
3. ຂັ້ນເມືອງ : ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ ແລະ ນະຄອນ ;
4. ຂັ້ນບ້ານ : ອົງການປົກຄອງບ້ານ.

**ມາດຕາ 23. ສິດ ແລະ ໜ້າທີ່ຂອງກົມເຄຫາ ແລະ ຜັງເມືອງ**

ກົມເຄຫາ ແລະ ຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງມະຫາພາກ ກ່ຽວກັບ ວຽກງານການປຸກສ້າງ ໃນຂອບເຂດທົ່ວປະເທດ ດັ່ງນີ້:

1. ຄົ້ນຄວ້າ ສະເໜີຂັ້ນເທິງ ສ້າງ ແລະ ປັບປຸງ ກົດໝາຍ ຫຼື ນິຕິກຳໃຕ້ກົດໝາຍ, ອອກບົດແນະນຳ ກ່ຽວກັບການຄຸ້ມຄອງ ແລະ ກວດກາການປຸກສ້າງ ເພື່ອນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ;

2. ເຜີຍແຜ່ ແລະ ຊີ້ນໍາ ການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ແຜນຜັງຕົວເມືອງ ແລະ ບົດແນະນໍາຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ກວດກາການປຸກສ້າງ, ພ້ອມທັງສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ ກ່ຽວກັບ ວຽກງານການຜັງເມືອງ, ການປຸກສ້າງ ແລະ ອື່ນໆ;

3. ຄົ້ນຄວ້າປະກອບຄໍາເຫັນຕໍ່ ແຜນຜັງລະອຽດຂອງ ເຂດຕົວເມືອງໃໝ່, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເພື່ອເປັນບ່ອນອີງໃຫ້ແກ່ການຮັບຮອງ ແຜນຜັງ ແລະ ການອະນຸຍາດປຸກສ້າງ;

4. ສະເໜີ ສັ່ງໂຈະການປຸກສ້າງ, ຍົກເລີກໃບອະນຸຍາດປຸກສ້າງ ທີ່ມີການລະເມີດ ກົດໝາຍ ແລະ ລະບຽບການກໍານົດ ຕໍ່ອົງການຄຸ້ມຄອງການຜັງເມືອງ ທີ່ກ່ຽວຂ້ອງ;

5. ເກັບກໍາຂໍ້ມູນສະຖິຕິ, ຕິດຕາມຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຜັງເມືອງ, ແຜນຜັງຕົວເມືອງ, ລະບຽບການຜັງເມືອງ ແລະ ຄຸ້ມຄອງການປຸກສ້າງ;

6. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 24. ສິດ ແລະ ໜ້າທີ່ຂອງຂະແໜງເຄຫາ ແລະ ຜັງເມືອງ

ຂະແໜງເຄຫາ ແລະ ຜັງເມືອງ, ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການປຸກສ້າງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ນໍາພາ ການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ແຜນຜັງຕົວເມືອງ ແລະ ບົດແນະນໍາຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ກວດກາການປຸກສ້າງ, ພ້ອມທັງສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ ກ່ຽວກັບ ວຽກງານການຜັງເມືອງ, ການປຸກສ້າງ ແລະ ອື່ນໆ;

2. ຄົ້ນຄວ້າພິຈາລະນາ, ນໍາສະເໜີ ອອກໃບອະນຸຍາດປຸກສ້າງ ລະດັບ 1 ແລະ 2, ຕິດຕາມກວດກາ ແລະ ສະເໜີອອກໃບຢັ້ງຢືນຄວາມຖືກຕ້ອງ ຂອງສິ່ງປຸກສ້າງ ລະດັບ 1 ແລະ 2;

3. ພົວພັນ, ປະສານສົມທົບ ແລະ ຂໍຄໍາຄິດຄໍາເຫັນ ນໍາພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງການປຸກສ້າງ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການກໍານົດ;

4. ເກັບຄ່າທໍານຽມ ແລະ ຄ່າບໍລິການວິຊາການ ກ່ຽວກັບ ການອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ລວມທັງຄ່າປັບໄໝຕ່າງໆ ຕາມກົດໝາຍ ແລະ ລະບຽບການກໍານົດ;

5. ຕິດຕາມກວດກາ, ສະເໜີ ສັ່ງໂຈະການປຸກສ້າງ, ຍົກເລີກໃບອະນຸຍາດປຸກສ້າງ ທຸກລະດັບ ທີ່ມີການລະເມີດ ກົດໝາຍ ແລະ ລະບຽບການກໍານົດ;

6. ເກັບກໍາຂໍ້ມູນສະຖິຕິ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຜັງເມືອງ, ລະບຽບການຜັງເມືອງ ແລະ ລະບຽບການຄຸ້ມຄອງການປຸກສ້າງ;

7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 25. ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ

ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຄຸ້ມຄອງການປຸກສ້າງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ນຳພາ ການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນຜັງຕົວເມືອງ ແລະ ບົດແນະນຳຕ່າງໆທີ່ກ່ຽວຂ້ອງກັບ ການຄຸ້ມຄອງ ແລະ ກວດກາການປຸກສ້າງ, ພ້ອມທັງສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ກ່ຽວກັບ ວຽກງານການຜັງເມືອງ, ການປຸກສ້າງ ແລະ ອື່ນໆ;

2. ຄົ້ນຄວ້າພິຈາລະນາ, ນຳສະເໜີ ອົງການປົກຄອງ ຂັ້ນເມືອງ ອອກໃບອະນຸຍາດປຸກສ້າງ ລະດັບ 3, ຕິດຕາມກວດກາ ແລະ ສະເໜີອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ລະດັບ 3;

3. ພົວພັນປະສານສົມທົບ ແລະ ຂໍຄຳຄິດຄຳເຫັນນຳພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງການປຸກສ້າງ ໃຫ້ສອດຄ່ອງກັບລະບຽບ ການຜັງເມືອງ ແລະ ການຄຸ້ມຄອງການປຸກສ້າງ;

4. ເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ອອກໃບອະນຸຍາດປຸກສ້າງ ໃນລະດັບທີ່ຕົນຮັບຜິດຊອບ ຕາມກົດໝາຍ ແລະ ລະບຽບການກຳນົດ;

5. ຕິດຕາມກວດກາ, ສັ່ງໂຈະ ຫຼື ຍົກເລີກ ການປຸກສ້າງ, ໃບອະນຸຍາດປຸກສ້າງ ຫຼື ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ລະດັບ 3 ໃນກໍລະນີທີ່ເຫັນວ່າມີການລະເມີດ ກົດໝາຍ ແລະ ລະບຽບການກຳນົດ;

6. ເກັບກຳຂໍ້ມູນສະຖິຕິ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຜັງເມືອງ, ລະບຽບ ການຜັງເມືອງ ແລະ ການຄຸ້ມຄອງການປຸກສ້າງ;

7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການປຸກສ້າງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ແລະ ນຳພາ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ຄຳແນະນຳກ່ຽວກັບວຽກງານ ການຜັງເມືອງ, ການປຸກສ້າງ ແລະ ອື່ນໆ ພ້ອມທັງ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ກ່ຽວກັບວຽກງານດັ່ງກ່າວ;

2. ປຸກລະດົມປະຊາຊົນ ປະກອບສ່ວນເຂົ້າໃນວຽກງານ ການຜັງເມືອງ, ການປຸກສ້າງ ແລະ ອື່ນໆ;

3. ມີໜ້າທີ່ ກວດກາ ແລະ ຢັ້ງຢືນສັນຍາກັບຜູ້ຢູ່ຂ້າງຄຽງ;

4. ສົມທົບກັບ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ແລະ ເຈົ້າໜ້າທີ່ການຜັງເມືອງຕິດຕາມກວດກາການປະຕິບັດມາດຕະການ ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນການປຸກສ້າງ;

5. ລາຍງານ ສະພາບການປຸກສ້າງໃຫ້ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ.

# ໝວດທີ IX
# ການກວດກາ ແລະ ການແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງ ກ່ຽວກັບການປຸກສ້າງ

**ມາດຕາ 27. (ໃໝ່) ການກວດກາການປຸກສ້າງ**

ການກວດກາການປຸກສ້າງ ມີ ສອງ ຮູບການ ດັ່ງນີ້:

1. ການກວດກາພາຍໃນ ໂດຍອົງການຄຸ້ມຄອງການຜັງເມືອງ ທີ່ອອກອະນຸຍາດປຸກສ້າງ ລະດັບ ຕ່າງໆ ເປັນຜູ້ກວດກາ ຕາມມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ;

2. ການກວດກາພາຍນອກ ໂດຍເຈົ້າໜ້າທີ່ຜັງເມືອງ ຕາມມາດຕາ 86, 87, 88 ຂອງກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ).

**ມາດຕາ 28. (ໃໝ່) ການລາຍງານຜົນການກວດກາ**

ການລົງກວດກາແຕ່ລະຄັ້ງ ຖ້າພົບເຫັນມີ ການກະທຳທີ່ເປັນການລະເມີດ ກົດໝາຍ, ລະບຽບການ ກ່ຽວກັບ ການຜັງເມືອງ, ການປຸກສ້າງ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຕ້ອງໄດ້ແຈ້ງໃຫ້ທຸກພາກສ່ວນກ່ຽວຂ້ອງຊາບ ແລະ ລາຍງານຜົນການກວດກາ ຢ່າງເປັນລາຍລັກອັກສອນ ພ້ອມທັງສະເໜີວິທີແກ້ໄຂໃຫ້ ອົງການຄຸ້ມຄອງການຜັງເມືອງ ແຕ່ລະຂັ້ນ ຊາບຢ່າງທັນການ.

**ມາດຕາ 29. (ໃໝ່) ການແກ້ໄຂ ບັນຫາ ຫຼື ຂໍ້ຂັດແຍ່ງ**

ການແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງ ກ່ຽວກັບການປຸກສ້າງ ຕ້ອງໄດ້ດຳເນີນດ້ວຍຮູບໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປານີປານອມ: ຄູ່ກໍລະນີ ສາມາດເຈລະຈາ, ໄກ່ເກ່ຍປານີປານອມກັນ;
2. ການແກ້ໄຂທາງດ້ານບໍລິຫານ: ຄູ່ກໍລະນີ ມີສິດສະເໜີຕໍ່ອົງການຄຸ້ມຄອງການຜັງເມືອງ ທີ່ຕົນໄດ້ຮັບອະນຸຍາດນັ້ນ ຕາມກົດໝາຍ ແລະ ລະບຽບການກຳນົດ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂດ້ານເສດຖະກິດ: ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ເພື່ອພິຈາລະນາ ຕາມກົດໝາຍ ແລະ ລະບຽບການກຳນົດ;
4. ການຕັດສິນຂອງສານ: ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມກົດໝາຍ ແລະ ລະບຽບການກຳນົດ;
5. ການແກ້ໄຂທີ່ມີລັກສະນະສາກົນ: ໃຫ້ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ X
## ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 30. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 31. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 32. ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດລະບຽບການ ເປັນຕົ້ນຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມໃຫ້ປັບປຸງແກ້ໄຂ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 33. ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຜັງເມືອງ ຫຼື ເຈົ້າໜ້າທີ່ອື່ນທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນຄວາມຜິດຕາມລະບຽບການ ພ້ອມທັງບັນທຶກໄວ້ໃນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນ, ຊັ້ນຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະກອນໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ປະຕິບັດວິໄນ ຈະຕ້ອງໄດ້ສົ່ງຄືນຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງໂດຍຄົບຖ້ວນ.

**ມາດຕາ 34. (ໃໝ່) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ເຄີຍຖືກກ່າວເຕືອນ ແລະ ສຶກສາອົບຮົມແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝຕາມກໍລະນີ ດັ່ງນີ້:

1. ປຸກສ້າງໂດຍບໍ່ໄດ້ຮັບການອະນຸຍາດ ເຈົ້າຂອງສິ່ງປຸກສ້າງ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າສິ່ງປຸກສ້າງທີ່ໄດ້ເຮັດມາແລ້ວ ແຕ່ບໍ່ເກີນ 5,000,000 ກີບ ພ້ອມທັງໃຫ້ຢຸດເຊົາ ແລະ ຮື້ຖອນສິ່ງປຸກສ້າງ ;

2. ປຸກສ້າງບໍ່ຖືກກັບແບບແຜນຜັງທີ່ໄດ້ຮັບການອະນຸຍາດ ແລະ ຜິດກັບລະບຽບການຜັງເມືອງ ເຈົ້າຂອງສິ່ງປຸກສ້າງ ຈະຖືກປັບໃໝແຕ່ 500,000 ກີບ ຫາ 5,000,000 ກີບ ພ້ອມທັງໃຫ້ຮື້ຖອນ ສ່ວນທີ່ບໍ່ຖືກຕ້ອງອອກ;

3. ຮັບເໝົາປຸກສ້າງໃຫ້ຜູ້ທີ່ບໍ່ໄດ້ຮັບການອະນຸຍາດ ຈະຖືກປັບໃໝ ສິບສ່ວນຮ້ອຍ ( 10% ) ຂອງມູນຄ່າສິ່ງປຸກສ້າງທີ່ໄດ້ເຮັດມາແລ້ວ ແຕ່ບໍ່ເກີນ 10,000,000 ກີບ ພ້ອມທັງໃຫ້ຢຸດເຊົາ;

4. ຮັບເໝົາປຸກສ້າງໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງ ຫຼື ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ ຈະຖືກປັບໃໝ ສິບສ່ວນຮ້ອຍ ( 10% ) ຂອງມູນຄ່າໂຄງການກໍ່ສ້າງ ແຕ່ບໍ່ເກີນ 10,000,000 ກີບ ແລະ ຕ້ອງຢຸດເຊົາໂດຍເດັດຂາດ;

5. ຜູ້ໄດ້ຮັບອະນຸຍາດ ແລະ ຜູ້ຮັບເໝົາປຸກສ້າງ ບໍ່ປະຕິບັດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ຕາມມາດຕາ 18 ແລະ 19 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝແຕ່ 300,000 ກີບ ຫາ 3,000,000 ກີບ;

**ມາດຕາ 35. ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 36. ມາດຕະການທາງອາຍາ**

ບຸກຄົນທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍອາຍາ.

## ໝວດທີ XI

## ບົດບັນຍັດສຸດທ້າຍ

**ມາດຕາ 37. ການຈັດຕັ້ງປະຕິບັດ**

ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ການຄຸ້ມຄອງການປຸກສ້າງ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ມອບໃຫ້ກົມເຄຫາ ແລະ ຜັງເມືອງ ສົມທົບກັບອົງການຄຸ້ມຄອງການຜັງເມືອງ ແຕ່ລະຂັ້ນ ໂຄສະນາ, ເຜີຍແຜ່ ແລະ ແນະນຳການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 38. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 7681/ຄຂປກ, ລົງວັນທີ 29 ມິຖຸນາ 2005 ແລະ ສະບັບເລກທີ 621/ກຄຜ, ລົງວັນທີ 11 ພະຈິກ 2013.

ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ